**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ກະຊວງການເງິນ**

ເລກທີ 0424 /ກງ
ນະຄອນຫຼວງວຽງຈັນ, ວັນທີ 11 ກຸມພາ 2020

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທັງພາກລັດ ແລະເອກະຊົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້ ທີ່ຖືກຮັບຮອງຈາກກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII ໃນປີ 2019.

- ກົດໝາຍອາກອນວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ (ສະບັບປັບປຸງ), ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ກົດໝາຍວ່າດ້ວຍ ອາກອນລາຍໄດ້, ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;
- ກົດໝາຍວ່າດ້ວຍ ອາກອນຊົມໃຊ້, ສະບັບເລກທີ 70/ສພຊ, ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017.

ກະຊວງການເງິນ ຖືເປັນກຽດ ແຈ້ງມາຍັງທຸກພາກສ່ວນຊາບວ່າ ກົດໝາຍອາກອນ 03 ສະບັບ ຄື: ກົດໝາຍວ່າການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະກົດໝາຍວ່າດ້ວຍອາກອນຊົມໃຊ້ ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII ໃນປີ 2019 ແລ້ວນັ້ນ ໃຫ້ເລີ່ມຈັດຕັ້ງປະຕິບັດ ແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນໄປ, ສຳລັບພາກສ່ວນ ທີ່ໄດ້ປະຕິບັດພັນທະອາກອນ ປະຈຳເດືອນ ມັງກອນ 2020 ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ແລ້ວ ແມ່ນໃຫ້ສາມາດໄລ່ລຽງ ແລະດັດແກ້ຄືນໃໝ່ໄດ້.

ສຳລັບການນຳເຂົ້າ ສິນຄ້າ ເຄື່ອງຂອງ ຈາກຕ່າງປະເທດ ແມ່ນໃຫ້ເລີ່ມປະຕິບັດອັດຕາອາກອນຊົມໃຊ້ຕາມກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບໃໝ່ ນັບແຕ່ວັນທີ 19 ກຸມພາ 2020 ເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງຂໍຖືເປັນກຽດຮຽນມາຍັງທຸກພາກສ່ວນ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

ສຳເນົາ :
- ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າຂັ້ນສູນກາງ;
- ບັນດາທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ;
- ບັນດາກົມອ້ອມຂ້າງກະຊວງການເງິນ.